ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

1930- .1

ກະຊວງ-ອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ / ຫກ.ຄພນ

ນະຄອນຫລວງວຽງຈັນ,ວັນທີ 17 JUL 2009

## ແຈ້ງການ

ເຖິງ : ພະແນກ ອຸດສາຫະກຳ ແລະ ການຄ້າ ປະຈຳ ແຂວງ ແລະ ນະຄອນ
( ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ).

ເລື່ອງ: ກ່ຽວກັບການອອກອະນຸຍາດຕັດກາປະທັບຂອງບັນດາວິສາຫະກິດແລະສະມາຄົມ ຫລື ກຸ່ມທຸລະກິດການຄ້າ.

- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງແລະນຳໃຊ້ກາປະທັບເລກທີ່ 218/ນຍ,ລົງວັນທີ 19/7/05.
- ອີງຕາມບົດບັນທຶກກອງປະຊຸມສະບັບລົງວັນທີ 15/7/09.

ເພື່ອຈັດຕັ້ງຜັນຂະຫຍາຍວຽກງານດັ່ງກ່າວໃຫ້ສອດຄ່ອງກັບບັນດານິຕິກຳທີ່ມີໃນປະຈຸບັນແລະໃຫ້ໄດ້ສຸມໃສ່ປ່ຽນແປງຢ່າງແທ້ຈິງຕໍ່ລະບົບທີ່ຍັງມີຫລາຍຂັ້ນ,ຫລາຍຂອດ,ໃຊ້ເວລາເກີນຄວາມຈຳເປັນໃຫ້ໄດ້ຫລຸດຜ່ອນລະບົບຂັ້ນຕອນ, ເອກະສານປະກອບແນ່ໃສ່ຕອບສະໜອງແລະຮັບບໍລິການໃຫ້ມີຄວາມສະດວກວ່ອງໄວ,ບໍ່ສ້າງຄວາມລຳຄານແກ່ຜູ້ປະກອບການທຸລະກິດການລົງທຶນທັງພາຍໃນແລະຕ່າງປະເທດ ໃຫ້ໄດ້ຮັບການພັດທະນາ.

ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຖືເປັນກຽດແຈ້ງມາເພື່ອສຸມໃສ່ຈັດຕັ້ງປະຕິບັດດັ່ງນີ້ :

1. ອອກໃບອະນຸຍາດຕັດກາປະທັບໃນເວລາຂຶ້ນທະບຽນວິສາຫະກິດໃຫ້ບັນດາຫົວໜ່ວຍວິສາຫະກິດໂດຍບໍ່ໃຫ້ໃຊ້ຄຳຮ້ອງຂໍອະນຸຍາດຕັດກາປະທັບ,ບໍ່ໃຫ້ເອົາໃບທະບຽນອາກອນ,ໃບອະນຸຍາດອື່ນໆຄັດຕິດຕື່ມ.

   ສຳລັບຫົວໜ່ວຍວິສາຫະກິດທີ່ຖືທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດມີຈຸດປະສົງຢາກໃຊ້ກາປະທັບໃຫ້ສະເໜີຂໍໃບອະນຸຍາດຕັດກາປະທັບນຳຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດໄດ້ເລີຍ ແຕ່ຕ້ອງໃຫ້ຄັດຕິດສຳເນົາໃບທະບຽນວິສາຫະກິດມາພ້ອມ.
2. ສະມາຄົມຫລືກຸ່ມທຸລະກິດຫລັງຈາກໄດ້ຮັບການສ້າງຕັ້ງຂຶ້ນ ຕາມຂໍ້ກຳນົດເລກທີ 0834/ກຄ.ພນ,ລົງວັນທີ13ກໍລະກົດ 2001,ໃຫ້ອອກໃບອະນຸຍາດຕັດກາປະທັບຕາມມາດຕາ 8.2 ດຳລັດເລກທີ218/ນຍ, ລົງວັນທີ 19/7/05 ແລ້ວສົ່ງຫາກະຊວງປ້ອງກັນຄວາມສະຫງົບເປັນຜູ້ຕົກລົງອະນຸມັດຕັດ.
3. ແຈ້ງການສະບັບນີ້ໃຊ້ປ່ຽນແທນແຈ້ງການສະບັບເລກທີ່256/ກຄທ,ລົງວັນທີ4/4/01ແລະແຈ້ງການເລກທີ່626/ຫກ.ພນ, ລົງວັນທີ 8/4/03.ກ່ຽວກັບການອະນຸຍາດຕັດກາປະທັບ

ດັ່ງນັ້ນ,ຈຶ່ງແຈ້ງມາເພື່ອຈັດຕັ້ງປະຕິບັດແລະເພີ່ມວຽກງານການຄຸ້ມຄອງໃຫ້ມີປະສິດທິຜົນ.

ຫົວໜ້າຫ້ອງການ

ບຸນມີ ນະເກົ້ວງ

ບ່ອນນຳສົ່ງ :

- ຫ້ອງວ່າການ ສນຍ "ເພື່ອລາຍງານ"
- ກົມການປົກຄອງແລະລັດຖະກອນ "ເພື່ອລາຍງານ"
- ກະຊວງ ປ້ອງກັນຄວາມສະຫງົບ "ຂໍຄວາມຮ່ວມມື"
- ບັນດາ ພຈທ ໃນຂອບເຂດທົ່ວປະເທດ "ເພື່ອຈັດຕັ້ງປະຕິບັດ"